# ບົດທີ 6
# ການດຳເນີນຊີວິດຄຣິສຕຽນຢ່າງມີໄຊຊະນະ

<u>ຄຳແນະນຳ</u>:

<u>ຈຸດປະສົງຂອງບົດຮຽນ</u>:

- ເພື່ອໃຫ້ເຂົ້າໃຈຫລັກການພື້ນຖານຂອງຊີວິດຄຣິສຕຽນທີ່ມີໄຊຊະນະ.
- ເພື່ອໃຫ້ຮູ້ຈັກການຮັກສາໄຊຊະນະນັ້ນ.

<u>ໂຄ່ງຮ່າງບົດຮຽນ</u>

I. ຮູ້ຈັກກັບພະເຈົ້າ
   A. ບຸກຄົນໃນພະຄຳພີທີ່ຮູ້ຈັກກັບພະເຈົ້າ.
   B. ພວກເຮົາຈະຮູ້ຈັກພະເຈົ້າໄດ້ຢ່າງໃດ?
   C. ພະເຈົ້າສະແດງພະອົງຕໍ່ກັບພວກເຮົາແນວໃດ?

II. ຮູ້ຈັກພະຄຳຂອງພະເຈົ້າ
   A. ພະຄຳຂອງພະເຈົ້າມີຄວາມໝາຍຕໍ່ກັບຂ້ອຍວ່າແນວໃດ?
   B. ຂ້ອຍຄວນຈະມີການຕອບສະໜອງຫຍັງຕໍ່ພະຄຳຂອງພະເຈົ້າ?

III. ຮູ້ຈັກຕົວຕົນຂອງຕົວເອງ
   A. ເຈົ້າຄິດແນວໃດກັບຕົວຂອງເຈົ້າເອງ?
   B. ແມ່ນຫຍັງທີ່ເຈົ້າຈຳເປັນຕ້ອງຮູ້ກ່ຽວກັບຕົວຂອງເຈົ້າເອງ?

IV. ຮູ້ຈັກສັດຕູຂອງເຈົ້າ
   A. ຊາຕານແມ່ນໃຜ?
   B. ກົນອຸບາຍຂອງສັດຕູຂອງພວກເຮົາແມ່ນຫຍັງ?
   C. ແມ່ນຫຍັງທີ່ພວກເຮົາຈຳເປັນຕ້ອງຮູ້ກ່ຽວກັບສັດຕູຂອງພວກເຮົາ?
   D. ພວກເຮົາສາມາດເດີນໃນໄຊຊະນະໄດ້ແນວໃດ?

V. ຮູ້ຈັກວິທີຮັກສາໄຊຊະນະ
   A. ມີການເຝົ້າດ່ຽວເປັນປະຈຳ.
   B. ມີການສາມັກຄີທຳເປັນປະຈຳ
   C. ຮັກສາຄວາມຄິດຂອງເຈົ້າ
   D. ຮັກສາຄຳເວົ້າຂອງເຈົ້າ.
   E. ມີການຕີສອນການດຳເນີນຊີວິດຂອງເຈົ້າ.
   F. ກຳຈັດຄວາມບາບ
   G.

# I. ຮູ້ຈັກພະເຈົ້າ

*"ຜູ້ທີ່ຮູ້ຈັກພະເຈົ້າຂອງພວກເຂົາຈະສະແດງກຳລັງແລະເຮັດໃນສິ່ງທີ່ຍິ່ງໃຫຍ່."* *ດານີເອນ 11:32*

ຖ້າຫາກພວກເຮົາຮູ້ຈັກພະເຈົ້າ,ພວກເຮົາຈະເຂັ້ມແຂງແລະຮູ້ໄຊຊະນະ.ຖ້າພວກເຮົາບໍ່ຮູ້ຈັກພະເຈົ້າ ພວກເຮົາຈະອ່ອນແອ ແລະ ພ່າຍແພ້.

ຢູ່ໃນຫລັກຄຳສອນພື້ນຖານພວກເຮົາໄດ້ຮຽນຮູ້ກ່ຽວກັບພະລັກສະນະຂອງພະເຈົ້າໂດຍຜ່ານພະນາມຂອງພະອົງ,ບຸກຄະລິກຂອງພະອົງແລະທຳມະຊາດຂອງພະອົງ.

## *A. ບຸກຄົນຕ່າງໆໃນພະຄຳພີທີ່ໄດ້ຮູ້ຈັກກັບພະເຈົ້າ*

### 1. ໂມເຊ

a. ພະເຈົ້າຊົງກ່າວກັບໂມເຊດັ່ງມະນຸດກັບເພື່ອນ.

"*ພະຜູ້ເປັນເຈົ້າກ່າວກັບໂມເຊໜ້າຕໍ່ໜ້າ.*" ອົບພະຍົບ33:11

b. ໂມເຊໄດ້ສັດຊື່ໃນຖານະເປັນຜູ້ຮັບໃຊ້. ເຮັບເຣີ 3:5

ປະຫັວດຫຍໍ້ຂອງຊີວິດຂອງລາວ ເຮັບເຣີ 11:23-29
ການຊົງເອີ້ນຂອງພະເຈົ້າຈາກພຸ່ມໄມ້ໄຟ
ນຳຄົນອອກຈາກເອຢິບຫລາຍກວ່າ 2ລ້ານຄົນຂ້າມທະເລແດງ
ໄດ້ຂຶ້ນໄປເທິງພູແລະເຫັນສະຫງ່າລາສີຂອງພະເຈົ້າ
ໄດ້ຮັບບັນຍັດ 10 ປະການ
ທຸບຫີນແລະນ້ຳໄຫລອອກມາ

### 2. ດາວິດ

a. ໄດ້ຂຽນພະທຳເພງສັນລະເສີນໃນຂະນະທີ່ນັ່ງຢູ່ຂ້າງພູເບິ່ງແຍງແກະ **ເພງສັນລະເສີນ 23**

b. ພະເຈົ້າໄດ້ຊ່ວຍລາວຂ້າສິງ ແລະ ໝີ,ສະນັ້ນພະເຈົ້າຈຶ່ງໃຫ້ຄວາມໝັ້ນໃຈຊ່ວຍລາວໃນການຂ້າຍັກ.

c. ເປັນກະສັດປົກຄອງອິສະຣາເອນ,ແລະນຳການຊົງສະຖິດຂອງພະເຈົ້າຢູ່ເໜືອຄົນທັງປວງ.

3. ດານີເອນ

*"ແຕ່ພວກເຂົາບໍ່ສາມາດຈັບຜິດໄດ້ເພາະວ່າດານີເອນເປັນຄົນສັດຊື່ທີ່ສຸດ... ແບະ ບໍ່ໄດ້ເຮັດໃນສິ່ງທີ່ຜິດ... ຫລື ໃນສິ່ງທີ່ເສື່ອມເສຍໃດໆເລີຍ."* ດານີເອນ 6:4

a. ກະສັດໄດ້ຝັນ ແລະ ບໍ່ມີຜູ້ໃດສາມາດບອກວ່າຄວາມຝັນນັ້ນໝາຍ ຄວາມວ່າຢ່າງໃດ.ດານີເອນໄດ້ຖືກເອີ້ນໃຫ້ໄປຫາ. "ມີພະເຈົ້າຜູ້ຊົງສະຖິດໃນສະຫວັນຜູ້ຊຶ່ງເປີດເຜີຍເຖິງຄວາມລັບເລີກແລະພະອົງໄດ້ເປີດເຜີຍຕໍ່ເຈົ້າເຖິງສິ່ງຈະເກີດຂຶ້ນໃນອະນາຄົດ."

ສາມາດບອກກັບກະສັດທັງຄວາມຝັນແລະຕີຄວາມໝາຍ.

b. ອະທິຖານສາມເທື່ອຕໍ່ມື້ເຖິງວ່າຈະຖືກຂົ່ມເຫັງແລະຂູ່ຂ້າ. ໃນຖ້ຳສິງພະເຈົ້າໄດ້ປິດປາກຂອງພວກມັນແລະບໍ່ໃຫ້ມາທຳຮ້າຍຂ້ອຍ.

4. ສະເຕຟາໂນ

a. ໄດ້ເງີຍໜ້າຂຶ້ນເພ່ງເບິ່ງສວັນ ຈຶ່ງເຫັນພະຣັສມີຂອງພະເຈົ້າ ແບະ ເຫັນພະເຢຊູຊົງຢືນຢູ່ກ້ຳຂວາພະຫັດຂອງພະອົງ. ກິດຈະການ 7:55-56

b. ຂໍການຍົກໂທດແທນພວກເຂົາເພາະພວກເຂົາບໍ່ຮູ້. ຂໍ້. 60

5. ໂປໂລ

*" ໃຜຈະໃຫ້ພວກເຮົາຂາດຈາກຄວາມຮັກຂອງພະຄຣິດໄດ້ ຈະເປັນຄວາມທຸກບໍາບາກ, ຫລື ຄວາມທໍລະມານໃຈ, ຫລື ການຂົ່ມເຫັງ ແລະ ອື່ນໆ...ແຕ່ວ່າເຫດການທັງປວງເຫລົ່ານີ້ພວກເຮົາກໍ່ມີໄຊຊະນະຢູ່ຢ່າງເຫລືອລົ້ນ."* ໂຣມ 8:35-37

*" ເຮົາຖືກຄວາມທຸກລຳບາກອ້ອມຂ້າງ ແຕ່ບໍ່ເຖິງອັດຕັດ ເຮົາຈົນປັນຍາ ແຕ່ຍັງບໍ່ໝົດທາງອອກ."* 2 ໂກຣິນໂທ 4:8

ການທົນທຸກຂອງໂປໂລ. 2 ໂກຣິນໂທ 11:23-27

*" ສັນນັ້ນເພາະເຫັນແກ່ພະຄຣິດເຮົາຈຶ່ງຊື່ນໃຈໃນບັນດາຄວາມອ່ອນແອ, ໃນການຖືກໝິ່ນປມາດໃນຄວາມຍາກລຳບາກ, ໃນການຖືກຂົ່ມເຫັງ, ແລະໃນຄວາມຍາກຈົນ ເພາະວ່າ**ເຮົາອ່ອນແອເມື່ອໃດ ເຮົາກໍ່ຈະແຂງແຮງເມື່ອນັ້ນ.**"* 2 ໂກຣິນໂທ 12:10

*" ເພາະວ່າຖ້າເຮົາມີຊີວິດພະຄຣິດເຖິງເຮົາຕາຍກໍ່ເປັນປະໂຫຍດແກ່ເຮົາ."* ຟີລິບປອຍ 1:21

*B. ພວກເຮົາສາມາດຮູ້ຈັກພະເຈົ້າໄດ້ແນວໃດ?*

1. ໃນຖານະ **ພະຜູ້ສ້າງ ຂອງພວກເຮົາ.**

a. ເມື່ອພະເຈົ້າເລີ່ມຕົ້ນສ້າງ.ມັນບໍ່ໄດ້ເປັນແບບຄ່ອຍໆເປັນຄ່ອຍໆໄປ! ມີຫລາຍສິ່ງຫລາຍຢ່າງທີ່ແຕກຕ່າງກັນ, ດອກໄມ້, ປາ, ນົກ. ປະຖົມມະການ 1:1

b. ເຈັດມື້ຂອງການຊົງສ້າງ. ປະຖົມມະການ 1

c. ສ້າງມະນຸດໃນພະລັກສະນະຂອງພະອົງ. **ປະຖົມມະການ 1:26**

d. ຜູ້ຊົງເປັນກົກເຄົ້າຂອງສັພສິ່ງທັງປວງນັ້ນແມ່ນພະເຈົ້າ. **ເຮັບເຣີ 3:4**

*"ເມື່ອເຂົາທັງຫລາຍໄດ້ຍິນແລ້ວ ກໍພ້ອມໃຈກັນຍົກສຽງຂຶ້ນທູນພະເຈົ້າວ່າ, ຂ້າແດ່ພະເຈົ້າຕົນມະຫາຣາດ ພະອົງໄດ້ຊົງສ້າງຟ້າສວັນ ແຜ່ນດິນໂລກ, ນ້ຳທະເລ, ກັບສັພສິ່ງທີ່ຢູ່ໃນບ່ອນເຫລົ່ານີ້ .*
ກິດຈະການ **4:24**

*" ທຸກສ່ວນໃນຮ່າງກາຍແມ່ນພະອົງໄດ້ສ້າງຂຶ້ນມາ;ພະອົງໄດ້ປະກອບທຸກສ່ວນເຂົ້າກັນຢູ່ໃນທ້ອງແມ່."*
**ເພງສັນລະເສີນ139:13**

2. ໃນຖານະ **ພະບິດາທີ່ຊົງຮັກ.**

ອາດຈະເກີດຄວາມເຂົ້າໃຈຜິດຖ້າຫາກບິດາໃນໂລກນີ້ເປັນແບບຢ່າງບໍ່ດີ.

**ລູກທີ່ເສຍ** **ລູກາ 15:11-32**

*"ເຮົາຈະເປັນບິດາຂອງເຈົ້າ ແລະ ຝ່າຍເຈົ້າ,ຈະເປັນບຸດຊາຍບຸດຍິງຂອງເຮົາ."*
**2 ໂກຣິນໂທ 6:18**

*"ຫລາຍກວ່ານັ້ນອີກຈັກເທົ່າໃດ ພະບິດາຂອງທ່ານຜູ້ຊົງສະຖິດຢູ່ໃນສວັນ ຈະຊົງປະທານຂອງດີແກ່ຜູ້ທີ່ຂໍພະອົງ."* ມັດທາຍ**7:11**

*"ແຕ່ພວກເຈົ້າໄດ້ຮັບພະວິນຍານຜູ້ຊົງໃຫ້ເປັນບຸດຂອງພະເຈົ້າ ທີ່ໃຫ້ເຮົາທັງຫລາຍຮ້ອງເອີ້ນພະເຈົ້າວ່າ, ອັບບາ ຄື ພະບິດາ."*
**ໂຣມ 8:15**

3. ໃນຖານະເປັນ **ຜູ້ລ້ຽງ** ທີ່ດີ.

a. **ເພງສັນລະເສີນ 23**

b. ແກະທີ່ຍິນສຽງຂອງພະອົງ **ໂຢຮັນ 10:15**
ລາວຮ້ອງຫາແກະດ້ວຍຊື່ ແລະ ນຳພວກເຂົາ ແກະກໍ່ຕາມຫລັງເຮົາເພາະວ່າພວກເຂົາຮູ້ຈັກສຽງຂອງເຮົາ. ແກະຈະບໍ່ນຳຄົນທີ່ແປກໜ້າ

c. ປະຕູສູ່ຄອກແກະ,ສະຫລະຊີວິດຂອງຕົນ. **ໂຢຮັນ 10:11**

d. ເຮົາຮູ້ຈັກແກະຂອງເຮົາ ແລະ ແກະຂອງເຮົາກໍ່ຮູ້ຈັກເຮົາ. **ຂໍ້. 14**

e. ປະທານຊີວິດອັນຕະຫລອດໄປເປັນນິດ ແລະ ຈະບໍ່ຈິບຫາຍຈັກເທື່ອ. **ຂໍ້. 27-29**

GCI

4. ໃນຖານະເປັນຜູ້ສ້າງຂອງຊີວິດຂອງເຮົາ.

*"ເຮົາຜູ້ດຽວເທົ່ານັ້ນທີ່ຮູ້ແຜນການຂອງເຮົາສຳລັບພວກເຈົ້າ ຄື ແຜນການທີ່ນຳຄວາມຈະເລີນຮຸ່ງເຮືອງມາຍັງພວກເຈົ້າແລະ ບໍ່ແມ່ນນຳຄວາມຈິບຫາຍມາຍັງພວກເຈົ້າແຕ່ເປັນແຜນການທີ່ນຳຄວາມຫວັງມາສູ່ອະນາຄົດຂອງເຈົ້າ.ແລ້ວພວກເຈົ້າກໍຈະເອີ້ນຫາເຮົາ.ເມື່ອພວກເຈົ້າມາຫາເຮົາ ແລະ ອ້ອນວອນຫາເຮົາ ເຮົາກໍ່ຈະຕອບຄຳອ້ອນວອນຂອງພວກເຈົ້າ. ຖ້າພວກເຈົ້າຫາກຊອກຫາເຮົາຢ່າງໝົດຈິດໝົດໃຈ ພວກເຈົ້າກໍຈະພົບເຮົາແທ້."* ***ເຢເຣມີ 29:11-13***

5. ໃນຖານະພະເຈົ້າ **ອົງດຽວ.**

"*ເຮົາເປັນພະເຈົ້າຂອງເຈົ້າ,ຢ່າມີພະອື່ນນອກຈາກເຮົາ.*" **ອົບພະຍົບ20:23**

"ບໍ່ມີພະເຈົ້າອື່ນໃດທີ່ເປັນພະເຈົ້າອົງທ່ຽງແທ້ ແລະຊ່ອຍຊູເຮົາໄດ້." **ເອຊາຢາ 45:21**

6. ໃນຖານະເປັນປ້ອມປະການ ແລະ ເປັນກຳລັງ. **ເພັງສັນລະເສີນ 46:1**

7. ໃນຖານະເປັນສິລາ,ປ້ອມປະການ,ຜູ້ຊ່ອຍ,ໂລ່ ແລະ ທີ່ໝັ້ນ.

ຄົນສ້າງສະຫລາດສ້າງບ້ານຢູ່ເທິງດ່ານຫີນ **ເພັງສັນລະເສີນ 18:2**

8. ພະເຈົ້າຜູ້ຊຶ່ງຕອບສະໜອງຕໍ່ຄວາມເຊື່ອ. **ເຮັບເຣີ 11:6.**

ດ້ວຍເຮົາບອກທ່ານຕາມຄວາມຈິງວ່າ ຖ້າພວກທ່ານມີຄວາມເຊື່ອທໍ່ກັບເມັດຜັກກາດເມັດໜຶ່ງ ພວກທ່ານຈະສັ່ງພູໜ່ວນນີ້. **ມັດທາຍ 17:20**

ພະເຈົ້າໄດ້ຊົງປະທານແກ່ທຸກຄົນຕາມຂະໜາດແຫ່ງຄວາມເຊື່ອ.ພວກເຮົາສາມາດຂໍກັບພະເຈົ້າໃຫ້ເພີ່ມຄວາມເຊື່ອຂອງພວກເຮົາ. **ໂຣມ 12:3**

9. ໃນຖານະຂອງພະເຈົ້າທີ່ສາມາດນຳພວກເຮົາ.

"*ຈົ່ງເຂົ້າໃກ້ພະເຈົ້າແລະພະອົງຈະເຂົ້າມາໃກ້ເຈົ້າ.*" **ຢາໂກໂບ 4:8**

"*ເຫດສັນນັ້ນໃຫ້ເຮົາທັງຫລາຍມີໃຈກ້າເຂົ້າໄປເຖິງພະທີ່ນັ່ງແຫ່ງພະຄຸນ ເພື່ອພວກເຮົາຈະໄດ້ຮັບພະເມດຕາ ແລະ ພົບພະຄຸນທີ່ຈະຊ່ອຍເຮົາໃນເວລາທີ່ຕ້ອງການ.*" **ເຮັບເຣີ 4:16**

## *C. ພະເຈົ້າສະແດງພະອົງເອງຕໍ່ພວກເຮົາແນວໃດ?*

1. ໂດຍທຳມະຊາດ. **ໂຣມ 1:19-20**

2. ໂດຍຜ່ານຄວາມຄຶດຂອງພວກເຮົາ ໂຣມ **2:15**

3. ໂດຍຜ່ານ**ພະຄຳ.** ເຮັບເຣີ **1:1**

4. ໂດຍຜ່ານ **ອົງພະເຢຊູ.** ເຮັບເຣີ**1:2**

GCI

# II ຮູ້ຈັກພະຄຳຂອງພະເຈົ້າ

*"ພະຄຳພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພະເຈົ້າ ແລະ ເປັນປໂຍດໃນການສອນ,ການກ່າວຕັກເຕືອນວ່າກ່າວ,ການປັບປຸງແກ້ໄຂໃຫ້ຖືກຕ້ອງ, ແລະການອົບຮົມໃນທາງຊອບທັມ:"* **2 ຕີໂມທຽວ 3:16**

ມັນເປັນຄວາມຈິງ,ເປັນທີ່ໄວ້ໃຈໄດ້ ແລະ ເປັນສິ່ງທີ່ເຮົາຕ້ອງເຊື່ອຟັງສຳຫລັບທຸກສິ່ງ ທີ່ພວກເຮົາຕ້ອງເຮັດໃນຖານະທີ່ເປັນຄຣິສະຕຽນ.ເປັນພະຄຳຂອງພະເຈົ້າທີ່ມີຕໍ່ເຮົາແລະ ເປັນສິ່ງທີ່ພະເຈົ້າໄດ້ຊົງກ່າວກັບພວກເຮົາ,ພວກເຮົາຈຳເປັນຕ້ອງໃຊ້ເວລາກັບສິ່ງນີ້ເປັນປະຈຳທຸກໆອັນ.

## *A. ພະຄຳຂອງພະເຈົ້າມີຄວາມໝາຍຕໍ່ເຮົາວ່າແນວໃດ?*

1. ເປັນແຫລ່ງທີ່ມາຂອງຊີວິດແລະກຳລັງ. **ໂຢຮັນ 6:33**

   ຜູ້ປະກາດໃນພະຄຳພີເດີມໄດ້ເວົ້າເຖິງພະຄຳຂອງພະເຈົ້າວ່າເປັນອາຫານທີ່ພວກເຮົາຕ້ອງຮັບປະທານ.ເຮັດໃຫ້ຝ່າຍຈິດວິນຍານຂອງເຮົານັ້ນອີ່ມ.

2. **ເປັນແສງໂຄມນຳທາງ ແລະ ເປັນແສງແຈ້ງ**ສຳຫລັບທາງເດີນ. **ເພງສັນລະເສີນ119:105**

   ໃນສະໃໝກ່ອນທະຫານໄດ້ໃສ່ໂຄມນ້ອຍໆໄວ້ຢູ່ເທິງຫົວເຂົ່າເພື່ອເປັນແສງສ່ອງທາງໃນກ້າວຕໍ່ໄປ.

3. ຮັກສາພວກເຮົາຈາກຄວາມບາບ **ເພງສັນລະເສີນ119:11**

   ພະວິນຍານບໍຣິສຸດຈະນຳເຂົ້າໄປໃນຄວາມຊົງຈຳຂອງພວກເຮົາ.

4. **ອາວຸດ** ຕໍ່ສູ້ກັບສັດຕູ. **ມັດທາຍ 4:111**

   ພະເຢຊູກໍ່ໄດ້ໃຊ້ເໝືອນກັນ:

   a) ເພື່ອຕຳນິພວກທີ່ຖືພະບັນຍັດແລະປະເພນີ. **ມາຣະໂກ 7:69**

   b) ເພື່ອເຮັດໃຫ້ຫລັກຄຳສອນຖືກຕ້ອງ. **ມາຣະໂກ12:24-27**

   c) ເພື່ອສອນຫົນທາງແຫ່ງຄວາມລອດ. ລູກາ **10:25-28**

5. **ຊຳລະເຮົາ.** **ໂຢຮັນ15:3**

   ເມື່ອເຮົາໄດ້ອ່ານແລະຄິດທົບທວນ ມັນຈະຊຳລະຄວາມຄິດຂອງເຮົາ

6. **ເສີມສ້າງ**ຈິດວິນຍານ. **ກິດຈະການ 20:32**

7. **ໜູນໃຈແລະໃຫ້ຄວາມຫວັງ.** **ໂຣມ 15:4**

8. ຈະບໍ່ສູນເປົ່າຕໍ່ພະເຈົ້າແຕ່ຈະສຳເລັດຜົນໃນເປົ້າໝາຍທີ່ພະເຈົ້າຊົງໃຊ້ **ເອຊາຢາ 55:16-17**

   ຈະເຮັດໃຫ້ເຮົາມີຄວາມກ້າຫານເມື່ອເຮົາໄດ້ແບ່ງປັນພະຄຳກັບຄົນອື່ນໆ

9. ເພີ່ມພູນຄວາມເຊື່ອ. **ໂຣມ 10:17**

10. ຊ່ວຍພວກເຮົາໃຫ້ຈະເລີນເຕີບໃຫຍ່. **1 ເປໂຕ 2:2**

11. ເພື່ອຈະບໍ່ຫລົງຈາກທາງ. **ລູກາ 21:33**

12. **ພະຄໍາຂອງພະເຈົ້າປະກອບດ້ວຍຊີວິດແບະ ຣິດເດດ**,ຄົມກ່ວາດາບສອງຄົມທຸກດວງແທງຊອດເຖິງຈິດໃຈ ແລະວິນຍານ .

**ເຮັບເຣີ4:12**

*B. ຄວນຈະມີການຕອບສະໜອງຫຍັງຕໍ່ພະຄໍາຂອງພະເຈົ້າ?*

1. ໃຫ້ພະຄໍາສະຖິດຢູ່ໃນໃຈ. **ໂກໂລຊາຍ 3:16**

   ຈໍາເປັນຕ້ອງໄດ້ຄິດທົບທວນ. ທ່ອງຈໍາ.

   ຄໍາອຸປະມາເລື່ອງຜູ້ຫວ່ານ. ມັດທາຍ **13:38, 1923**

   ຖ້າພະຄໍາສະຖິດຢູ່ໃນໃຈຂອງເຮົາພວກເຮົາຈະເກີດຜົນໃນຣາຊແຜ່ນດິນຂອງພະເຈົ້າ.

2. ສາລະພາບ. **ໂຣມ 10:89**

   ການສາລະພາບດ້ວຍຖ້ອຍຄໍາສາມາດເປັນຣິດເດດອໍານາດໃນຊີວິດຂອງເຮົາ.ມັນຈະນໍາການປ່ຽນແປງມາສູ່ຈິດໃຈ,ຫົວໃຈໄດ້ຮັບການຊໍາລະ,ເຮັດໃຫ້ລີ້ນໄດ້ຮັບການຝຶກຝົນ ແລະ ນໍາມາຊຶ່ງຄວາມເຊື່ອ.ສາລະພາບຕົວຕົນ ຂອງເຮົາຕໍ່ກັບພະຄຣິດ.ສາລະພາບເຖິງໄຊຊະນະທີ່ພະອົງໄດ້ຮັບນັ້ນເພື່ອເຮົາ. ສາລະພາບວ່າ "*ການດີທຸກສິ່ງໄດ້ເລີ່ມຕົ້ນໄວ້ສໍາຫລັບຜູ້ທີ່ຮັກພະອົງ.*" etc.

3. **ຮຽນຮູ້.** **2 ຕີໂມທຽວ 2:15**

   ໃຫ້ພະເຈົ້າກ່າວກັບເຮົາໂດຍຜ່ານພະຄໍາຂອງພະອົງ.ບໍ່ໃຫ້ໂຍ່ນຖິ້ມ.ແຕ່ໃຫ້ຝັງເລິກແລະເປັນສິ່ງທີ່ລ້າຄ່າ.ສາມາດອະທິຖານເພື່ອໃຫ້ພະຄໍາທີ່ເຮົາອ່ານນັ້ນມີຄວາມໝາຍຕໍ່ກັບເຮົາໃຫ້ຫລາຍທີ່ສຸດ.

4. ນໍາໃຊ້ເຂົ້າໃນຊີວິດຂອງເຮົາ.

   ຂໍພະເຈົ້າສະແດງໃຫ້ເຫັນສິ່ງທີ່ຢູ່ໃນພະຄໍາຂອງພະເຈົ້າເພື່ອຈະນໍາໃຊ້ເຂົ້າໃນຊີວິດປະຈໍາວັນ. "ຮັກສັດຕູຂອງເຈົ້າ;ເຮັດດີຕໍ່ຜູ້ທີ່ກຽດຊັງເຈົ້າ.ແລະ ອື່ນໆ."

5. **ເຊື່ອຟັງ.** **ຢາໂກໂບ 1:22-25**

   ໃຫ້ເປັນຜູ້ຂັບຕາມແລະບໍ່ພຽງແຕ່ເປັນຜູ້ໄດ້ຍິນ.

   ທຸກຄົນທີ່ຟັງຄໍາເຫລົ່ານີ້ຂອງເຮົາແລະປະຕິບັດຕາມ ຄົນນັ້ນກໍປຽບເໝືອນຄົນສະລາດທີ່ກໍ່ສ້າງຕຶກຂອງຕົນເທິງດານຫີນ. ມັດທາຍ **7:2427**

6. **ມີການແບ່ງປັນ.**

ພະຄຳມີອຳນາດນຳຄົນມາເຖິງພະຄຣິດ.ພະຄຳຂອງພະເຈົ້າມີຣິດເດດອຳນາດ. ພະເຈົ້າສັນຍາວ່າພະຄຳຂອງພະເຈົ້າຈະບໍ່ສູນເປົ່າ. ເມື່ອພວກເຮົາມີໂອກາດໄດ້ແບ່ງປັນກັບຜູ້ເຊື່ອຄົນອື່ນພວກເຮົາກໍ່ໄດ້ເສີມສ້າງເຊິ່ງກັນແລະກັນ ແລະ ໜູນໃຈເຊິ່ງກັນແລະກັນ.

## III. ຮູ້ຈັກຕົວຕົນຂອງຕົວເອງ

*"ລາວຄິດແບບໃດລາວກໍ່ເປັນແບບນັ້ນ."* **ສຸພາສິດ 23:7**

### A. ເຈົ້າຄິດແນວໃດກັບຕົວຂອງເຈົ້າເອງ?

ບາງຄົນຄິດສູງກວ່າພວກເຂົາເປັນ, ບາງຄົນຄິດຕ່ຳກວ່າທີ່ພວກເຂົາເປັນ. ຄົນທີ່ເບິ່ງຕົນເອງຕ່ຳຈະເຊື່ອງຊ້ອນປະສິດທິພາບຂອງເຈົ້າໃນວຽກງານຂອງພະເຈົ້າ ແລະ ຈະບໍ່ຊ່ວຍໃຫ້ເຈົ້າມີໄຊຊະນະໃນບາດກ້າວເດີນຂອງຄຣິສະຕຽນ.ນັ້ນສະແດງວ່າເຈົ້າພັດທະນາຄວາມຄິດແລະ ທັດສະນະຄະຕິໃນທາງລົບໃນຕົວຂອງເຈົ້າ.ພວກເຮົາ ຖືກບ່ວງແຮ້ວດ້ວຍຄຳເວົ້າຂອງພວກເຮົາເອງ. ສາມຢ່າງທີ່ເກີດຂຶ້ນເມື່ອເຮົາ ເບິ່ງພາບພົດຂອງຕົວເອງຕ່ຳ. **ສຸພາສິດ 6:2**

1. ເຈົ້າບໍ່ມີຄວາມໝັ້ນໃຈໃນຕົວຂອງເຈົ້າເອງ.

2. ເຈົ້າບໍ່ສາມາດຫາເປົ້າໝາຍໃນຊີວິດຂອງເຈົ້າ.

3. ເຈົ້າມີຄວາມຮູ້ສຶກຂອງການປະຕິເສດ,ຄວາມຜິດຫວັງ ແລະ ຄວາມບໍ່ໝັ້ນຄົງ.

4. ໂມເຊມີປະສົບການກັບສິ່ງນີ້ຕອນທີ່ພະເຈົ້າໄດ້ເອີ້ນໂມເຊເພື່ອໃຫ້ນຳ ອິນຊາດອິດສຣະເອນອອກຈາກເອຢິບ. **ອົບພະຍົບ 3:11-4:13**

   a. ຂ້ານ້ອຍແມ່ນໃຜ*?*

   b. *ຂ້ານ້ອຍຈະບອກວ່າແມ່ນໃຜທີ່ສົ່ງຂ້ອຍມາ?*

   c. *ຖ້າພວກເຂົາບໍ່ເຊື່ອວ່າແມ່ນຂ້ານ້ອຍ?*

   d. *ຂ້ານ້ອຍເວົ້າບໍ່ເກັ່ງ*

   e. *ເປັນຫຍັງບໍ່ສົ່ງຄົນອື່ນໄປແທນ?*

   f. ພະເຈົ້າຖາມລາວວ່າ, "*ເຈົ້າມີຫຍັງຢູ່ໃນມື?*" – ພຽງແຕ່ເປັນຜູ້ຊ່ວຍ ຜູ້ລ້ຽງ. ແຕ່ເມື່ອໂມເຊຍອມຈຳນົນໃນສິ່ງທີ່ລາວມີຕໍ່ກັບພະເຈົ້າ,ພະ ເຈົ້າໄດ້ໃຊ້ເພື່ອ:

   **ເຮັດ** ການອັດສະຈັນໃນເອຢິບ

   **ແຍກ** ທະເລແດງຈົນພວກເຂົາສາມາດຍ່າງຜ່ານ

   **ທຸບ** ກ້ອນຫີນແລະນ້ຳກໍ່ໄຫຼອອກມາ

5. ກີດີໂອນ. **ພວກຜູ້ປົກຄອງ 6:11-16**

   a. *ຂ້າພະອົງຈະຊ່ອຍກູ້ຊາດອິດສະຣາເອນໄດ້ແນວໃດ?*

   b. *ຕະກຸນຂອງຂ້າພະອົງອ່ອນແອທີ່ສຸດ.*

   c. *ຂ້າພະອົງມີຄວາມສຳຄັນໜ້ອຍທີ່ສຸດໃນຄອບຄົວ.*

   ແຕ່ພະເຈົ້າກໍ່ໃຊ້ລາວນຳເອົາໄຊຊະນະມາສູ່ຊາດອິສະຣາເອນ.ພະອົງສຳແດງໃຫ້ກີດີໂອນເຫັນວ່າບໍ່ໄດ້ແມ່ນຍ້ອນຄວາມອ່ອນແອຂອງລາວແຕ່ດ້ວຍກຳລັງຂອງພະເຈົ້າ.

6. ສາເຫດຂອງການເຫັນຄຸນຄ່າໃນຕົວເອງຕ່ຳອາດເກີດໄດ້ດັ່ງນີ້:

   a. ຄວາມສຳພັນທີ່ບໍ່ດີກັບຄອບຄົວ

   b. **ການຕຳນິ** ຈາກພໍ່ແມ່

   c. ພໍ່ແມ່ທີ່ບໍ່ຕັກເຕືອນ

   d. **ເດັກທີ່ເກັບມາລ້ຽງ**

   e. ປະສົບການທີ່ບໍ່ດີຈາກໂຮງຮຽນ ຫລື ກັບໝູ່ເພື່ອນ

   f. **ພໍ່ແມ່** ເສຍຊີວິດເມື່ອຍັງນ້ອຍ.

7. ເຮົາສາມາດຮັບການຮັກສາຈາກອົງພະເຢຊູຄຣິສ.

   "*ພະອົງໄດ້ນຳເອົາຄວາມໂສກເສົ້າ ແລະ ຄວາມເສຍໃຈຂອງພວກເຮົາ...* ໂດຍການນັ້ນພວກເຮົາໄດ້ຮັບການຮັກສາ." **ເອຊາຢາ 53:45**

   ພວກເຮົາຈຳເປັນຕ້ອງຮູ້ວ່າຖືກຍອມຮັບໂດຍພະເຈົ້າຜູ້ຊົງສ້າງເຮົາ.ພວກເຮົາຈຳເປັນຕ້ອງຮູ້ວ່າພວກເຮົາແມ່ນໃຜໃນອົງພະເຢຊູຄຣິສແລະເລີ່ມເບິ່ງຕົວຂອງເຮົາເອງເໝືອນດັ່ງທີ່ພະອົງເບິ່ງເຮົາ.ສິ່ງນີ້ຈະຊ່ອຍໃຫ້ເຮົາມີຄວາມໝັ້ນໃຈໃນຕົວຂອງເຮົາແລະໃນພະເຈົ້າ,ຊ່ອຍໃຫ້ເຮົາຮູ້ສຶກປອດໄພເມື່ອຮູ້ວ່າເຮົາເປັນທີ່ຍອມຮັບ, ແລະຊ່ອຍເຮົາໃຫ້ປະສົບຜົນສຳເລັດໃນສິ່ງທີ່ພະເຈົ້າໃຊ້ເຮົາ.

   "ທຸກສ່ວນໃນຮ່າງກາຍແມ່ນພະອົງໄດ້ສ້າງຂຶ້ນມາ;ພະອົງໄດ້ປະກອບທຸກ ສ່ວນເຂົ້າກັນຢູ່ໃນທ້ອງແມ່.ຍົກຍໍພະເຈົ້າເພາະພະອົງເປັນທີ່ຢ້ານຢໍາ.ທຸກສິ່ງທີ່ພະອົງກະທຳຊ່າງງຶດງໍ້ປະຫລາດໃຈແທ້ໆ.... "ພະເຈົ້າບໍ່ເຄີຍຜິດພາດ. **ເພງສັນລະເສີນ139:13-15**

   "*ເພາະວ່າເຮົາທັງຫລາຍເປັນສີ່ພະຫັດຂອງພະອົງ ທີ່ຊົງສ້າງຂຶ້ນໃນພະ ເຢຊູຄຣິດ ເພື່ອໃຫ້ປະກອບການດີຊຶ່ງພະເຈົ້າໄດ້ຊົງຈັດຕຽມລ່ວງໜ້າໄວ້ ກ່ອນ ເພື່ອໃຫ້ເຮົາທັງຫລາຍປະຕິບັດຕາມ.*" **ເອເຟໂຊ 2:10**

GCI

B. *ແມ່ນຫຍັງທີ່ເຈົ້າຈຳເປັນຕ້ອງຮູ້ກ່ຽວກັບຕົວຂອງເຈົ້າ?*

1. ເຈົ້າມີຄຸນຄ່າຕໍ່ພະເຈົ້າ. ເປັນສົມບັດລ້ຳຄ່າແລະພິເສດສຳຫລັບພະອົງ. **ມັດທາຍ6:26**

2. ເຈົ້າໄດ້ຮັບການອະໄພຈາກຄວາມບາບທຸກຢ່າງຂອງເຈົ້າ. **1 ໂຢຮັນ 1:9**

3. ເຈົ້າໄດ້ຮັບຊີວິດໃໝ່ເຊິ່ງເປັນຊີວິດທີ່ຢູ່ໃນອົງພະເຢຊູຄຣິດ. **2ໂກຣິນໂທ 5:17**

4. ເຈົ້າໄດ້ຖືກຄຶງດ້ວຍກັນກັບອົງພະເຢຊູຄຣິດ. ໂຣມ **6:6**

5. ເຈົ້າເປັນລູກຂອງພະເຈົ້າ. **ໂຢຮັນ 1:12**

   ເປັນຜູ້ຮ່ວມຮັບມໍລະດົກກັບພະຄຣິດ. **ໂຣມ 8:1617**

6. ເຈົ້າມີຄວາມສົມບູນໃນພະຄຣິດແລະບໍ່ຕ້ອງການສິ່ງອື່ນມາຕື່ມອີກ. **ໂກໂລຊາຍ 2:910**

   ວຽກງານຕ້ອງເຮັດໃຫ້ສຳເລັດແຕ່ເຮົາບໍ່ການສິ່ງໃດມາຕື່ມອີກ!

7. ເຈົ້າເປັນຄົນຊອບທຳໃນພະຄຣິດໂດຍທາງພະອົງດັ່ງຜູ້ບໍ່ມີຄວາມຜິດ ບາບນັ້ນ. **2 ໂກຣິນ ໂທ5:21**

8. ທຸກໆຄວາມຕ້ອງການໃນຊີວິດແມ່ນເຮົາພົບໄດ້ໃນພະອົງ. **ຟີລິບປອຍ 4:19**

9. ເຮົາສາມາດເຮັດທຸກສິ່ງໄດ້ໂດຍພະອົງຜູ້ຊົງຊູກຳລັງ .. ຟີລິບປອຍ **4:13**

10. ພະເຈົ້າຊົງທຳງານໃນເຈົ້າ. ຟີລິບປອຍ**2:13**

11. ພະອົງໄດຊົງໂຜດດຶງເຮົາທັງຫລາຍໃຫ້ພົ້ນຈາກອຳນາດຂອງຄວາມມືດ ແລະ ໄດ້ຊົງໂຍນຍ້າຍພວກເຮົາ ໄປຕັ້ງໄວ້ໃນຣາຊອານາຈັກແຫ່ງພະບຸດທີ່ຮັກຂອງພະອົງ. ໃນພະບຸດນັ້ນເຮົາທັງຫລາຍຈຶ່ງໄດ້ຮັບການ ໄຖ່ໃຫ້ພົ້ນ ຄືຊົງໂຜດຍົກຜິດບາບທັງຫລາຍຂອງເຮົາ **ໂກໂລຊາຍ 1:13–14**

12. ເຈົ້າໄດ້ຮັບໄຊຊະນະ. **ໂຣມ 8:37**

13. ເຈົ້າໄດ້ປະທັບໃນສະຫວັນສະຖານໃນອົງພະເຢຊູຄຣິດ,ສູງກວ່າຜູ້ມີອຳນາດ.. ເອເຟໂຊ **1:20–22,26**

14. ເຈົ້າໄດ້ຮັບສິດອຳນາດໃຫ້ຢູ່ເໜືອກຳລັງຂອງສັດຕູ. **ລູກາ 10:9**

15. ເຈົ້າໄດ້ຮັບອຳນາດໃຫ້ ສາມາດ ຜູກມັດ ແລະ ແກ້. ມັດທາຍ**16:19, 12:29**

GCI

# IV. ຮູ້ຈັກສັດຕູຂອງທ່ານ

## A. *"ຊາຕານແມ່ນໃຜ?"*

ເລື່ອງສອງແຜ່ນດິນທີ່ມີການຕໍ່ຕ້ານກັນ **ເອເຊກຽນ 28:11-19**

| **ຊາຕານ** | **ພະເຢຊູ** |
|---|---|
| ຄວາມມືດ | ແສງສະຫວ່າງ |
| ຄວາມຊົ່ວ | ຄວາມຊອບທຳ |
| ຄວາມຕາຍ | ຊີວິດ |
| ການກ່າວຫາ | ການໃຫ້ອະໄພ |
| ການຫລອກລວງ | ນຳໄປສູ່ຄວາມຈິງ |
| ຍາດເອົາຖ້ອຍຄຳ | ປູກຖ້ອຍຄຳ |

## B. *ແມ່ນຫຍັງຄືກົນລະຍຸດຂອງຊາຕານ?*

1. ລໍ້ລວງ.

ທົດລອງພະເຢຊູໂດຍຮຽກຮ້ອງຈາກຄວາມປາດຖະໜາ3ຢ່າງ. **ມັດທາຍ 4:3**

**ຮ່າງກາຍ** ຕອບສະໜອງຝ່າຍຮ່າງກາຍດ້ວຍອາຫານຫລັງຈາກ ຖືກສິນອົດ!
**ຈິດໃຈ** ສະເໜີການຄອບຄອງແລະເປັນພະເຈົ້າຂອງໂລກນີ້.
**ຈິດວິນຍານ** ໃຫ້ນະມັສະການມັນ.

ແຕ່ລະຄັ້ງພະເຢຊູໄດ້ປາບດ້ວຍພະຄຳຂອງພະເຈົ້າທີ່ເປັນອາວຸດ!

2. ຕົວະ.

ບິດາຂອງການຕົວະ. ເຮັດໃຫ້ເຮົາຕົວະຄືມັນ **ໂຢຮັນ 8:44**

ປອມຕົວເປັນເທວະດາຂອງຄວາມສະຫວ່າງ. **2 ໂກຣິນໂທ 11:14**

3. ຫລອກລວງ. **ພະນິມິດ 20:3,8**

4. ໃສ່ຮ້າຍ.

'*ເຈົ້າໄດ້ເອີ້ນຕົວຂອງເຈົ້າວ່າເປັນຄຣິສະຕຽນ*!' ພະນິມິດ **12:10**

ພະຍາຍາມເຮັດໃຫ້ເຈົ້າຮູ້ສຶກຜິດ. ກ່າວໂທດ. **ໂຣມ 8:1**

GCI

5. ລັກ,ຂ້າ ແລະ ທຳລາຍ.

ຊອກຫາລັກພະຄຳຈາກຫົວໃຈ,ຂ້າເອົາຄວາມຍິນດີ ແລະ ຄວາມເຊື່ອຈາກພະເຈົ້າ,ແລະ ທຳລາຍຊີວິດຄຣິສຕຽນຂອງພວກ ເຮົາ. **ໂຢຮັນ10:10**

6. ຊອກຫາທຳລາຍ.

ທ່ຽວອົນວອນເໝືອນກັບສິງໂຕທີ່ແຜດສຽງ. **1 ເປໂຕ5:8**

7. **ເຈົ້າໂລກແຫ່ງຄວາມມືດ.** **ເອເຟໂຊ 6:12**

8. **ປິດບັງ** ຈິດໃຈຂອງມະນຸດບໍ່ໃຫ້ໄດ້ຍິນຂ່າວປະເສີດ.
**2 ໂກຣິນໂທ 4:4**

*C. ພວກເຮົາຈຳເປັນຕ້ອງຮູ້ຫຍັງກ່ຽວກັບສັດຕູຂອງພວກເຮົາ?*

1. ກິດຈະການຂອງມາໄດ້ຖືກທຳລາຍ. **1 ໂຢຮັນ 3:8**

ແຕ່ບໍ່ໄດ້ໝາຍຄວາມວ່າມັນຈະບໍ່ໄດ້ຢູ່ອ້ອມຮອບເຮົາອີກຕໍ່ໄປ,ແຕ່:

ເຮັດໃຫ້ລິດອຳນາດຂອງມັນໝົດໄປ

*ເຮັດໃຫ້ມັນບໍ່ເຫລືອສິ່ງ*

*ເຮັດໃຫ້ບໍ່ມີຜົນກະທົບ*

*ໄດ້ຖືກເຮັດໃຫ້ຢຸດສະງັດ*

2. ພະເຢຊູໄດ້ມີໄຊຊະນະເໜືອພວກມັນ ແລະ ປະຈານເຂົາ.
**ໂກໂລຊາຍ 2:15**

ລິດອຳນາດທັງໝົດຖືກປົດ ແລະ ຖືກເປັນຊະເລີຍ.

3. ຈຸດຈົບຂອງພວກມັນຈະຖືກໂຍນລົງບຶງໄຟຕະຫລອດໄປ.
**ພະນິມິດ 20:7-10**

4. ອຳນາດທັງໝົດນັ້ນເປັນຂອງພະເຢຊູ. **ມັດທາຍ 28:20**

ນີ້ໝາຍຄວາມວ່າມານຮ້າຍບໍ່ມີອຳນາດອີກຕໍ່ໄປ.

5. ພະເຢຊູໄດ້ໃຫ້ພວກເຮົາມີອຳນາດເໜືອມານຊາຕານ. **ລູກາ 10:1719**

ໄຊຊະນະຂອງພະເຢຊູມີຢູ່ໃນເຮົາ.

*D. ພວກເຮົາສາມາດເດີນຢູ່ໃນໄຊຊະນະໄດ້ແນວໃດ?*

*ຈົ່ງນ້ອມໃຈຍອມຟັງພະເຈົ້າຈົ່ງຕໍ່ສູ້ກັບມານແລະມັນຈະໜີຈາກພວກເຈົ້າໄປ.*

ຢາໂກໂບ 4:7

*1. ພວກເຮົາຈະຕ້ານທານກັບມັນແນວໃດ?*

ໃຫ້ສວມຍຸດທະພັນທັງຄົບຊຸດຂອງພະເຈົ້າເພື່ອເຈົ້າສາມາດຢືນຕໍ່ສູ້ກັບກົນອຸບາຍຂອງພະຍາມານໄດ້.

2. ທະຫານຂອງພະເຢຊູ. ເອເຟໂຊ 6:10-18

**ຄວາມຈິງຄາດແອວ** – ອ້ອມຮອບດ້ວຍຄວາມຈິງເພາະ ພະເຢຊູເປັນຄວາມຈິງ. ຂໍ້. 14

**ເອົາຄວາມຊອບທຳເປັນເຄື່ອງປ້ອງກັນເອິກ** – ຢູ່ໃນຄວາມຊອບທຳກັບພະເຈົ້າ. ຮັກສາຈິດໃຈຂອງພວກເຮົາ. ຂໍ້. 14

ຂ່າວປະເສີດເລື່ອງສັນຕິສຸກ – ເອົາຄວາມພັ່ງພ້ອມຝ່າຍຂ່າວປະເສີດ ສຸບໃສ່ຕີນ.ສັນຕິສຸກຂອງພະອົງຢູ່ໃນເຮົາ.ຕຽມພ້ອມໃນການປະກາດຂ່າວປະເສີດໃນທຸກໆບ່ອນທີ່ພະອົງຈະນຳເຮົາ. ຂໍ້. 15

ຄວາມເຊື່ອເປັນເຂນ – ມີຄວາມເຊື່ອໃນພະເຈົ້າ ແລະ ຈະມີໄຊຊະນະ ເໜືອສັດຕູ. ຂໍ້. 16

**ຄວາມພົ້ນເປັນເຄື່ອງຄຽນປ້ອງກັນຫົວ** – ປົກຄຸມຈິດໃຈ. ພວກເຮົາຮູ້ວ່າພວກເຮົາໄດ້ເກີດໃໝ່ອີກຄັ້ງ. ຂໍ້. 17

**ພະແສງຂອງພະວິນຍານ** –ພະຄຳຂອງພະເຈົ້າເປັນອາວຸດເພື່ອໃຊ້ຕໍ່ສູ້. ຂໍ້. 18

**ຈົ່ງອ້ອນວອນໂດຍພະວິນຍານ ທຸກເວລາ.** ຂໍ້. 18

2. ໃຊ້ອາວຸດທີ່ພະເຈົ້າປະທານໃຫ້ກັບເຮົາເພື່ອຕໍ່ສູ້ກັບມານ.

3. ເພາະວ່າເຄື່ອງອາວຸດຂອງເຮົາມີຣິດອຳນາດຈາກພະເຈົ້າ ອາດທຳລາຍຄ້າຍ ອັນເຂັ້ມແຂງໄດ້.

2 ໂກຣິນໂທ 10:4

ພະອົງສັນຍາວ່າຈະຝຶກເຮົາເພື່ອພ້ອມຕໍ່ການສູ້ຮົບ. 2 ຊາມູເອນ 22:35

ຈະບໍ່ມີອາວຸດແນວໃດທີ່ສາມາດທຳຮ້າຍເຈົ້າໄດ້. ເອຊາຢາ 54:17

GCI

a) ໂລຫິດຂອງພະເຢຊູຄຣິດ. ເປັນເຄື່ອງປ້ອງກັນເພື່ອໃຫ້ພົ້ນໄພ.

ໃຫ້ໂລຫິດປົກຄຸມເມື່ອໄປພະວິຫານ,ໄກ້ກັບຖ້ານໄວ້ຮູບເຄົາລົບ,ໃນສະຖານທີ່ອັນຕະລາຍຫລືເມື່ອຮູ້ສຶກຢ້ານ.

b) ໃນພະນາມຂອງພະເຢຊູຄຣິດ. ຟີລິບປອຍ 2:9–10

ດາວິດໄດ້ມາໃນນາມຊື່ຂອງພະເຈົ້າອົງຊົງພະຊົນຢູ່!ນາມຊື່ແຫ່ງລິດອຳນາດ.

"*ໃນພະນາມຂອງພະເຢຊູ ...*"*ຢ່າໃຊ້ນາມຊື່ຂອງພະອົງໄປໃນທາງທີ່ຜິດ ຫລື ເພື່ອຄວາມມ່ວນຊື່ນ!*

c) **ພະຄຳຂອງພະເຈົ້າ.** **ເຮັບເຣີ 4:12**

ຊະນະການຕໍ່ສູ້ຂອງພະຍາມານດ້ວຍພະຄຳຂອງພະເຈົ້າ.

d) **ສັນລະເສີນ –** ໂປໂລ ແບະ ສີບາ,ເຢໂຮຊາຟາດ

3. ກະແຈສູ່ໄຊຊະນະ. **ພະນິມິດ 12:11**

ຊະນະມານຊາຕານໂດຍ:

a) **ໂລຫິດຂອງພະຄຣິດ**

b) ຄຳພະຍານຂອງພວກເຂົາ

c) ການຮັກບໍ່ແມ່ນການມີຊີວິດຊຶ່ງນຳສູ່ຄວາມຕາຍ

4. ຂໍ້ພະຄຳຫລັກໆທີ່ຄວນຈື່ຈຳ:

a) "*ພະອົງຜູ້ຊົງສະຖິດໃນພວກເຈົ້າກໍ່ເປັນໃຫຍ່ກວ່າທຸກສິ່ງໃນໂລກ.*"
**1 ໂຢຮັນ 4:4**

b) "*ແຕ່ວ່າຈົ່ງຂອບພະຄຸນພະເຈົ້າຜູ້ຊົງປະທານໄຊຊະນະແກ່ເຮົາທັງ ຫລາຍດ້ວຍພະເຢຊູຄຣິສເຈົ້າຂອງພວກເຮົາ.*" **1 ໂກຣິນໂທ 15:57**

c) "ພວກເຮົາກໍມີໄຊຊະນະຢູ່ຢ່າງເຫລືອລົ້ນ ດ້ວຍພະອົງຜູ້ຊົງຮັກເຮົາ ທັງຫລາຍນັ້ນ."
**ໂຣມ 8:37**

GCI

# V. ຮູ້ຈັກວິທີຮັກສາໄຊຊະນະ

*A. ມີການເຝົ້າດ່ຽວເປັນປະຈຳ.*

ສຳຫລັບທຸກໆຄວາມສຳພັນທີ່ຕ້ອງມີການພັດທະນາແລະການຈະເລີນເຕີບໂຕ,ມີຄວາມຈຳເປັນຕ້ອງການການສື່ສານທີ່ດີ. ສຳຫລັບຄວາມສຳພັນຂອງພວກເຮົາກັບ ພະເຈົ້າກໍ່ເໝືອນກັນ,ເພື່ອໃຫ້ມີການຈະເລີນເຕີບໂຕພວກເຮົາຈຳເປັນຕ້ອງເວົ້າແລະຟັງພະອົງ.

1. ເປັນຫຍັງການເຝົ້າດ່ຽວຈຶ່ງມີຄວາມສຳຄັນ?

   a) ເມື່ອພວກເຮົາສາມັກຄີທຳກັບພະເຈົ້າເປັນປະຈຳ ຈະເຮັດໃຫ້ ພວກເຮົາເຕີບໃຫຍ່ຝ່າຍຈິດວິນຍານ.

   b) ການເຝົ້າດ່ຽວເປັນປະຈຳສະແດງເຖິງຄວາມຮັກຂອງພວກເຮົາຕໍ່ ພະເຈົ້າ ແລະ ການຖວາຍຕົວໃຫ້ຢູ່ໃນທາງຂອງພະອົງ.

   c) ໃນລະຫວ່າງການເຝົ້າດ່ຽວພວກເຮົາສາມາດໄດ້ຮັບຄຳແນະນຳ ແລະ ການນຳຈາກພະເຈົ້າສຳຫລັບການດຳເນີນຊີວິດໃນແຕ່ລະວັນ.

   d) ພະວິນຍານຂອງພວກເຮົາຈະໄດ້ຮັບການໜູນໃຈ ແລະ ໄດ້ຮັບການເສີມສ້າງຂຶ້ນ ແລະ ຈະຊ່ວຍໃຫ້ເຮົາດຳເນີນຊີວິດຕາມ ນ້ຳພະໄທຂອງພະເຈົ້າ, ໂດຍສະເພາະເມື່ອເຮົາປະເຊີນກັບເວລາ ທີ່ຫຍຸ້ງຍາກ ແລະ ການລໍ້ລວງ.

2. ຈະເຮັດໃຫ້ການເຝົ້າດ່ຽວເກີດຜົນໄດ້ແນວໃດ:

   a) ໃຫ້ເລືອກ **ສະຖານທີ່** ທີ່ງຽບ ແລະ ບໍ່ມີສິ່ງທີ່ມາລົບກວນ

      ມາລະໂກ 1:35 ພະເຢຊູໄດ້ອອກໄປຍັງບ່ອນທີ່ສະງັດ
      ມາລະໂກ 6:46 ພະອົງໄດ້ສະເດັດເມືອພູ
      ລູກາ 5:16 ພະອົງໄດ້ອອກໄປກາງປ່າ
      ລູກາ 6:12 ພະອົງໄດ້ໃຊ້ເວລາອະທິຖານຕະຫລອດຄືນ

   b) ໃຫ້ເລືອກເອົາເວລາທີ່ແນ່ນອນແລະເອົາເຂົ້າໃນແຕ່ລະມື້ຂອງເຈົ້າ.

      ພະເຈົ້າສົມຄວນຈະໄດ້ຮັບເວລາທີ່ດີສຸດຂອງເຮົາສະນັ້ນບໍ່ ຄວນເຮັດໃນເວລາທີ່ເຈົ້າຮູ້ສຶກເມື່ອຍ.ສຳຫລັບຂ້າພະເຈົ້າແມ່ນເປັນສິ່ງທຳອິດໃນເວລາຕອນເຊົ້າ.

3. ການເຝົ້າດ່ຽວມີຢູ່ສາມພາກສ່ວນ:

   a) **ສັນລະເສີນ.**

      "*ຂ້າພະເຈົ້າຈະຂອບຄຸນພະຜູ້ເປັນເຈົ້າ ຢູ່ຕະຫລອດເວລາ ຂ້າພະອົງຈະບໍ່ເຊົາສັນລະເສີນພະອົງຈັກເທື່ອ.*" **ເພງສັນລະເສີນ 34:1**

      ຮ້ອງເພງທີ່ເຈົ້າຮູ້ຈັກ.

ຮ້ອງຈາກພະຄຳ.
ຮ້ອງເພັງບົດໃໝ່.
ສັນລະເສີນໂດຍໃຫ້ຈິດໃຈຂອງເຮົາຈົດຈໍ່ຢູ່ທີ່ພະເຈົ້າ.
ການສັນລະເສີນຂັບໄລ່ສັດຕູອອກໄປ.
ການສັນລະເສີນເປັນການຕຽມຈິດໃຈຂອງເຈົ້າເພື່ອຮັບພະຄຳຂອງພະເຈົ້າ.

b) ອ່ານ **ພະຄຳຂອງພະເຈົ້າ.**

"ຈົ່ງຕັ້ງໜ້າອ່ານປື້ມພະບັນຍັດນີ້ໃນເວລານະມັສະການ.ຈົ່ງສຶກສາເອົາທຸກມື້ທຸກຄືນ ແລະ ເຈົ້າຕ້ອງປະຕິບັດຕາຖ້ອຍຄຳ ທີ່ໄດ້ມີຂຽນໄວ້ໃນນັ້ນຢ່າງຕັ້ງໜ້າ.ແລ້ວເຈົ້າກໍຈະປະສົບຄວາມສຳເລັດ ແລະ ມີ ຄວາມຈະເລີນກ້າວໜ້າ." **ໂຢຊວຍ 1:8**

(i) ມີ**ລະບົບ** ໃນການອ່ານ.ອ່ານພະຄຳພີໃໝ່ ສອງບົດຕໍ່ມື້ ແລະ ເຈົ້າສາມາດອ່ານຈົບເຫລັ້ມໃນເວລາ 4 ເດືອນ.

(ii) ຂໍພະວິນຍານບໍລິສຸດເປັນຜູ້ສອນໃນເວລາອ່ານ.

(iii) **ຄິດຕຶກຕອງ** ໃນສິ່ງທີ່ເຈົ້າໄດ້ອ່ານໄປນັ້ນ.

(iv) **ເວົ້າ** ຂໍ້ພະຄຳບາງຂໍ້ໃນເວລາທີ່ເຈົ້າອະທິຖານຫລື ຮ້ອງເພັງ.ການເວົ້າອອກມາຈະເປັນສິ່ງທີ່ລ້ຽງຈິດວິນຍານ ຂອງເຈົ້າ ແລະ ຊ່ວຍຕໍ່ສູ້ກັບການໂຈມຕີຂອງຊາຕານ ດັ່ງແບບຢ່າງຂອງອົງພະເຢຊູຄຣິດ.

(v) **ໃຫ້** ໃນສິ່ງທີ່ພະເຈົ້າໄດ້ບອກ.

(vi) ໃຫ້ ນຳ ໃຊ້ ໃນສິ່ງທີ່ເຈົ້າໄດ້ອ່ານ.

(vii) ທ່ອງຈຳ**ຂໍ້ ຄວາມຫລັກໆ ໃນຂໍ້ພະຄຳພີນັ້ນ.**

c) **ອະທິຖານ.**

(i) **ຂອບຄຸນພະເຈົ້າ ແລະ ສັນລະເສີນ ພະເຈົ້າຢ່າງ** ທີ່ພະອົງເປັນ, ແລະ ໃນສິ່ງທີ່ພະອົງໄດ້ກະທຳຕໍ່ເຈົ້າ.

(ii) **ສາລະພາບ** ຄວາມບາບທຸກຢ່າງ ຫລື ທັດສະນະຄະຕິທີ່ບໍ່ ໃຫ້ ອະໄພ ຊຶ່ງພະວິນຍານບໍລິສຸດໄດ້ເຕືອນເຈົ້ານັ້ນ.

(iii) ຂໍພະເຈົ້າສຳຫລັບສິ່ງທີ່ຈຳເປັນສຳຫລັບແຕ່ລະມື້ຂອງ ເຈົ້າ, ຊີວິດຂອງເຈົ້າ ແລະ ຂໍດ້ວຍຄວາມເຊື່ອ.

(iv) **ອທິຖານ** ສຳຫລັບຄົນອື່ນໆ: ຄອບຄົວ,ເພື່ອນ,ໂບດ,ປະເທດ, ແລະ ປະເທດອື່ນໆ. ໃຫ້ພະວິນຍານນຳເຈົ້າ.

ບາງຄົນຂຽນຄຳອະທິຖານອອກເປັນລາຍການ. Others ໃຫ້ອະທິຖານສະເພາະເຈາະຈົງສຳຫລັບແຕ່ລະສິ່ງໃນແຕ່ລະມື້:

ຄອບຄົວ
ເພື່ອນ

GCI

ໂບດ
ພັນທະກິດຂອງເຈົ້າ
ງານມິດຊັນ ແລະ ມິດຊັນນາລີ
ຕົວເອງ
ປະເທດແລະ ລັດຖະບານ

(v) **ຂອບຄຸນ** ພະເຈົ້າສໍາຫລັບຄໍາຕອບ.

(vi) ປ່ອຍເວລາໃຫ້ພະເຈົ້າທີ່**ຈະກ່າວກັ**ບເຈົ້າເປັນການສ່ວນຕົວ.

## *B. ມີການສາມັກຄີທໍາກັບຄຣິດສະຕຽນຄົນອື່ນໆເປັນປະຈໍາ.*

ພວກເຮົາເປັນຮ່າງກາຍຂອງພະຄຣິດ.ພະຄຣິດເປັນສີສະ.ສະມາຊິກແຕ່ລະຄົນມີ ສ່ວນແລະ ທຸກໆສ່ວນມີຄວາມສໍາຄັນໃນຮ່າງກາຍ.ສ່ວນໜຶ່ງສ່ວນໃດບໍ່ສາມາດເວົ້າ ໄດ້ວ່າບໍ່ຕ້ອງການເປັນສ່ວນໜຶ່ງຂອງຮ່າງກາຍໄດ້. ຖ້າອະໄວຍະອະໜຶ່ງ ເຈັບອະໄວຍະອະອື່ນກໍ່ເຈັບດ້ວຍກັນໝົດ.. **1 ໂກຣິນໂທ 12**

ຖ້າອະໄວຍະໜຶ່ງເຈັບ ອະໄວຍະອະທັງໝົດກໍ່ເຈັຍດ້ວຍກັນ. ຖ້າອະໄວຍະອະໜຶ່ງໄດ້ ຮັບກຽດ ອະໄວຍະອະທັງໝົດກໍ່ຊົມຊື່ນຍິນດີດ້ວຍກັນ. **ຂໍ້. 26**

**ການສາມັກຄີທໍາ** ຂອງຄຣິສຕະຈັກໃນຍຸກເລີ່ມຕົ້ນ: **ກິດຈະການ 2:42-47**

1) ຕັ້ງໝັ້ນຢູ່ໃນຄໍາສອນInstruction in the Word.
ໃນການຮ່ວມໃຈກັນCommunion
ອະທິຖານPrayer **ຂໍ້. 42**

2) **ການອັດສະຈັນ** ໄດ້ເກີດຂຶ້ນ. **ຂໍ້. 43**

3) **ແບ່ງປັນ** ທຸກສິ່ງຮ່ວມກັນ ຂໍ້.44

4) **ມີການຢ້ຽມຢາມ** ຄົນອື່ນໆຕາມບ້ານ ແລະ ແບ່ງປັນອາຫານຮ່ວມກັນ. **ຂໍ້. 45**

5) **ນະມັສະການຮ່ວມກັນ** **ຂໍ້. 46**

ຜົນຂອງການມີການສາມັກຄີທໍາ:ມີສະມາຊິກໃໝ່ເພີ່ມໃໝ່ຂຶ້ນເລື້ອຍ!

## *C. ຮັກສາຄວາມຄິດຂອງເຈົ້າ.*

ສັດຕູໄດ້ໂຈມຕີຄຣິສະຕຽນດ້ວຍຄວາມຄິດ.ວິທີທີ່ພວກເຮົາຄິດມີຜົນຕໍ່ການດໍາເນີນຊີວິດຂອງເຮົາ.
"*ລາວຄິດແບບໃດລາວກໍ່ເປັນຄົນແບບນັ້ນ.*" **ສຸພາສິດ 23:7**

" *ໃຫ້ປາບຄວາມຄິດທຸກປະການ.*" **2 ໂກຣິນໂທ 10:5**

GCI

ເມື່ອຄວາມຄິດທີ່ບໍ່ດີເຂົ້າມາເຊັ່ນ:ຄວາມຢ້ານ,ຄວາມສົງໃສ,ຄວາມພ່າຍແພ້,ຄວາມຄິດທີ່ບໍ່ບໍລິສຸດ ແລະ ອື່ນໆ ໃຫ້ຈັດການກັບມັນໂດຍທັນທີ.ຢ່າໄປທ້າທາຍກັບ ພວກມັນ ຫລື ໃຫ້ໂອກາດກັບພະຍາມານ.

**ຟີລິບປອຍ 4:8** ບອກເຮົາໃນສິ່ງທີ່ພວກເຮົາຄວນຄິດ:

ໃນສິ່ງໃດ **ສັດຈິງ,ໜ້ານັບຖື,ຍຸດຕິທໍາ,ບໍຣິສຸດ,ໜ້າຮັກ,ສິ່ງທີ່ໜ້າຍິນດີ, ສິ່ງທີ່ຄວນແກ່ການສັນເສີນ.**

*D. ຮັກສາຄໍາເວົ້າຂອງເຈົ້າ.*

*ລີ້ນຕັດສິນຊີ້ຂາດຄວາມເປັນແລະຄວາມຕາຍ.* **ສຸພາສິດ 18:2**

*"ລີ້ນກໍ່ເໝືອນກັນນັ້ນແຫລະ ເປັນອະໄວຍະວະນ້ອຍໆແລະເວົ້າອວດອ້າງໃນເລື່ອງໃຫຍ່." ຢາໂກໂບ* **3:5**

ຄໍາເວົ້າສາມາດ**ທໍາຮ້າຍ** ແລະ **ຮັກສາ**
ນໍາມາຊຶ່ງ**ຄວາມເສົ້າໂສກ**ຫລື ຄວາມຊົມຊື່ນຍິນດ
**ທໍາລາຍແລະເສີມສ້າງ**
ເປັນເຫດຂອງ**ຄວາມຢ້ານກົວ** ຫລື **ຄວາມຮັກ**
ໃຫ້**ຄວາມຕາຍ** ຫລື ຊີວິດ

*E. ມີການຕີສອນກັບການດໍາເນີນຊີວິດຂອງເຈົ້າ.*

ພະເຈົ້າຊົງຕີສອນຜູ້ທີ່ພະອົງຊົງ **ຮັກ.** ເຮັບເຣີ **12:5–11**

- ພະອົງຕີສອນພວກເຮົາໃນຖານະບຸດເພາະວ່າພະອົງເປັນພະບິດາຂອງເຮົາ.
- ພວກເຮົາຍອມຮັບການຕີສອນຈາກພະບິດາຂອງພວກເຮົາ.
- ພະອົງຊົງຕີສອນພວກເຮົາພວກເຮົາເພື່ອ**ປະໂຫຍດ**ຂອງພວກເຮົາເພື່ອໃຫ້ພວກເຮົາໄດ້ເຂົ້າຮ່ວມໃນສະພາບຄວາມບໍລິສຸດຂອງພະອົງ.
- ພະເຈົ້າປາຖະໜາໃຫ້ພວກເຮົາດໍາເນີນຊີວິດດ້ວຍການຖືກຕີສອນເພື່ອພວກເຮົາຈະເປັນແບບຢ່າງໃຫ້ກັບລູກຂອງພວກເຮົາ,ຄອບຄົວໃນຄວາມເຊື່ອ ແລະ ທັງຜູ້ທີ່ຍັງບໍ່ເຊື່ອ.

*F. ກໍາຈັດກັບຄວາມບາບ.*

"ຖ້າຂ້າພະອົງມີບາບຢູ່ໃນໃຈພະເຈົ້າກໍ່ຈະບໍ່ຟັງຂ້າພະອົງ." **ເພງສັນລະເສີນ 66:18**

ເພາະວ່າພະເຈົ້າຊົງເປັນພະເຈົ້າອົງບໍລິສຸດ.

ເລື່ອງຄວາມບາບຂອງອາການ.ຊາວອິດສະລາເອນບໍ່ໄດ້ຮັບໄຊຊະນະຈົນກວ່າເຂົາຈັດການກັບຄວາມບາບທີ່ຢູ່ໃນຖ້າມກາງພວກເຂົາ. **ໂຢຊວຍ 7:1–20**

ພະເຈົ້າຈະບໍ່ອະນຸຍາດໃຫ້ເຈົ້າຖືກທົດລອງເກີນກວ່າທີ່ເຈົ້າຈະທົນໄດ້, ແລະ ຈະຊົງໂຜດໃຫ້ເຈົ້າມີທາງຫລີກໜີໄປໄດ້ດ້ວຍ. **1 ໂກຣິນໂທ 10:13**

"ເຮົາຈະເອົາຈິດວິນຍານຂອງເຮົາໃສ່ໃຫ້ພວກເຈົ້າ,ເພື່ອພວກເຈົ້າຈະປະຕິບັດຕາມບັນຍັດຕ່າງໆ." ຮາເລລູຢາ!
**ເອເຊກຽນ 36:27**